**ສານອວຍພອນຂອງ ພະນະທ່ານ ດຣ. ບຸນທະວີ ສີສຸພັນທອງ,**
**ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ**
**ເນື່ອງໃນໂອກາດ ສະເຫຼີມສະຫຼອງວັນປະຊາກອນໂລກ ປະຈຳປີ 2012**
**ພາຍໃຕ້ຫົວຂໍ້: *"ຮັບປະກັນການເຂົ້າເຖິງສຸຂະພາບຈະເລີນພັນໃຫ້ແກ່ທຸກໆຄົນ"***

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງ ທີ່ໄດ້ຕາງໜ້າໃຫ້ ລັດຖະບານ ແຫ່ງ ສປປ ລາວ ກ່າວສານອວຍພອນ ແລະ ມີຄຳເຫັນຕໍ່ການສະເຫຼີມສະຫຼອງວັນປະຊາກອນໂລກ ປະຈຳປີ 2012. ໂດຍປົກກະຕິແລ້ວ ກະຊວງແຜນການ ແລະ ການລົງທຶນ ແລະ ອົງການ ສະຫະປະຊາຊາດ ກອງທຶນສຳລັບປະຊາກອນ ໄດ້ພ້ອມກັນຈັດວັນສະເຫຼີມສະຫຼອງ ປະຊາກອນໂລກ ໃນວັນທີ່ 11 ກໍລະກົດ ເປັນປະຈຳທຸກໆປີ ເພື່ອລະນຶກເຖິງມື້ທີ່ມີຄວາມ ໝາຍ ທີ່ສະແດງເຖິງຄວາມສຳຄັນຂອງການຂະຫຍາຍຕົວຂອງປະຊາກອນໂລກ ທີ່ໄດ້ບັນລຸ 5 ຕື້ຄົນ ໃນປີ 1987 ແລະ ເຊັ່ນດຽວກັນ 24 ປີຕໍ່ມາ ພວກເຮົາກໍ່ໄດ້ເປັນສັກຂີພະຍານ ແລະ ພ້ອມກັນກ້າວຂຶ້ນສູ່ຍຸກທີ່ມີປະຊາກອນຫຼາຍກວ່າ 7 ຕື້ຄົນ ໃນວັນທີ່ 31 ຕຸລາ 2011 ທີ່ຜ່ານມາ.

ສຳລັບການສະເຫຼີມສະຫຼອງວັນປະຊາກອນໂລກໃນປີນີ້ ເປົ້າໝາຍທີ່ສຳຄັນທີ່ ພັກ-ລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາ ຢາກຍົກສູງ ແລະ ສ່ອງແສ່ງໃຫ້ເຫັນແມ່ນ ຄວາມສຳຄັນ ແລະ ຈຳເປັນອັນຮີບດ່ວນ ຕໍ່ "***ການເຂົ້າເຖິງການບໍລິການສຸຂະພາບຈະເລີນພັນ ຂອງທຸກໆຄົນ ໃນທົ່ວໂລກ ກໍ່ຄື ໃນ ສປປ ລາວ***" ເຊິ່ງແມ່ນໜຶ່ງ ຈຸດໝາຍທີ່ສຳຄັນເພື່ອຮັບປະກັນໄດ້ການບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ໃນປີ 2015 ໂດຍສະເພາະແມ່ນເປົ້າໝາຍ ທີ່ 5 " ***ປັບປຸງສຸຂະພາບຂອງແມ່*** ". ເພື່ອ ຮັບຮອງການເຂົ້າເຖິງການບໍລິການສຸຂະພາບຈະເລີນພັນຢ່າງກວ້າງຂວາງ ບໍ່ວ່າຈະຢູ່ໃນ ສປປລາວ ກໍ່ຄືເວທີສາກົນ, ບັນດາປະເທດຕ່າງໆໃນໂລກນີ້ ໄດ້ມີການຮັບຮອງເອົາ ແຜນດຳເນີນງານການຈັດ ຕັ້ງປະຕິບັດ ຜົນຂອງກອງປະຊຸມສາກົນວ່າດ້ວຍ "ປະຊາກອນ ແລະ ການພັດທະນາ" (ICPD) ທີ່ໄດ້ຈັດຂຶ້ນໃນປີ 1994 ແລະ ມີ 179 ປະເທດເຂົ້າ ຮ່ວມ, ເຊິ່ງລວມທັງ ສປປ ລາວ. ດັ່ງນັ້ນ, ມື້ນີ້ຖືວ່າເປັນໂອກາດດີ ອີກຄັ້ງໜຶ່ງ ທີ່ ທົ່ວພັກ

ທົ່ວປວງຊົນໃນຊາດ ຈະເຕົ້າໂຮມກຳລັງ ແລະ ພ້ອມກັນຢືນຢັນຄວາມສາມັກຄີ ແລະ ເສຍສະຫຼະເພື່ອສູ້ຊົນ ແລະ ຈັດຕັ້ງປະຕິບັດພາລະໜ້າທີ່ຂອງຕົນ ເຂົ້າໃນວຽກງານບໍລິການສາທາລະນະສຸກ, ການສະໜອງຂໍ້ມູນຂ່າວສານ ແລະ ອຸປະກອນຕ່າງໆດ້ານສຸຂະພາບໃຫ້ໄດ້ທົ່ວເຖິງໃນ ສປປ ລາວ ດັ່ງທີ່ໄດ້ກຳນົດໄວ້ໃນແຜນການທີ່ຍົກຂື້ນໃນກອງປະຊຸມໃນປີ 1994.

ອີງໃສ່ແຜນດຳເນີນງານການຈັດຕັ້ງປະຕິບັດຜົນຂອງກອງປະຊຸມ ICDP, ວຽກງານສຸຂະພາບຈະເລີນພັນ ແມ່ນໝາຍເຖິງ ວຽກງານໜຶ່ງເພື່ອເຜີຍແຜ່ ແລະ ຂົນຂວາຍໃຫ້ທຸກຄົນເຂົ້າໃຈວ່າ ທຸກໆຄົນແມ່ນມີຄວາມສາມາດ ແລະ ມີຄວາມຮັບຜິດຊອບ ຕໍ່ການມີຊີວິດທີ່ປອດໄພ, ມີຄວາມຮັບຮູ້ ແລະ ເຂົ້າໃຈດ້ານສຸຂະພາບຈະເລີນພັນ, ມີອິດສະຫຼະພາບໃນການຕັດສິນໃຈກ່ຽວກັບເວລາອັນເໝາະສົມທີ່ຈະມີເພດສຳພັນ ແລະ ແນ່ນອນ ຄວາມຮັບຜິດຊອບດັ່ງກ່າວແມ່ນສິດທິຂອງ ທັງຜູ້ຊາຍ ແລະ ແມ່ຍິງທຸກຄົນ ທີ່ຄວນໄດ້ຮັບຮູ້, ສາມາດເຂົ້າເຖິງວິທີການທີ່ປອດໄພ, ແລະ ເປັນທີ່ຍອມຮັບເພື່ອເປັນທາງເລືອກໃຫ້ແກ່ການດູແລສຸຂະພາບຢ່າງເໝາະສົມ ແລະ ທີ່ສຳຄັນວຽກງານສຸຂະພາບຈະເລີນພັນ ແມ່ນການຮັບປະກັນໃຫ້ໄດ້ວ່າ ແມ່ຍິງທີ່ຖືພາທຸກໆຄົນແມ່ນຄວນມີສຸຂະພາບແຂງແຮງ ແລະ ປອດໄພທັງໄລຍະການຖືພາ ແລະ ໄລຍະເກີດລູກ ທັງນີ້ກໍ່ເພື່ອໃຫ້ໂອກາດທີ່ດີທີ່ສຸດແກ່ຄອບຄົວທີ່ຈະໄດ້ມີສະມາຊິກຄອບຄົວທີ່ມີສຸຂະພາບແຂງແຮງ".

ການເຂົ້າເຖິງການບໍລິການດ້ານສຸຂະພາບຈະເລີນພັນ ແມ່ນສິດທິຂອງແມ່ຍິງ, ຜູ້ຊາຍ ແລະ ໄວໜຸ່ມ ທຸກໆຄົນໃນການເສີມສ້າງ ແລະ ພັດທະນາຊຸມຊົນ ແລະ ປະເທດຊາດ ເພື່ອທີ່ຈະຮັບຮອງໄດ້ວ່າ ໃນ ສປປ ລາວ "... ການຖືພາທຸກຄັ້ງແມ່ນເກີດຂື້ນດ້ວຍຄວາມຕັ້ງໃຈ, ການເກີດລູກທຸກຄັ້ງມີຄວາມປອດໄພ ແລະ ໄວໜຸ່ມທຸກຄົນມີໂອກາດບັນລຸເປົ້າໝາຍຕາມຄວາມສາມາດຂອງຕົນ..."

ຢູ່ ສປປ ລາວ ປະມານ 60% ຂອງປະຊາກອນ ແມ່ນຍັງຢູ່ໃນອາຍຸໄວຈະເລີນພັນ ເຊິ່ງກຸ່ມດັ່ງກ່າວ ມີຄວາມຕ້ອງການສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ

ມີຄວາມສາມາດປະກອບສ່ວນໃນການພັດທະນາ ທາງດ້ານເສດຖະກິດ, ວັດທະນະທຳ ແລະ ສັງຄົມ ແລະ ທີ່ສຳຄັນແມ່ນຄວນໄດ້ຮັບການປ້ອງກັນ ແລະ ຫຼີກລ້ຽງຈາກສິ່ງທີ່ບໍ່ປາດຖະ ໜາ ເຊັ່ນ: ການຖືພາໂດຍບໍ່ຕັ້ງໃຈ, ພະຍາດຕິດຕໍ່ທາງເພດສຳພັນ, ພະຍາດ HIV ແລະ ຢາເສບຕິດຕ່າງໆ. ຕໍ່ກັບສິ່ງດັ່ງກ່າວ, ພວກເຮົາຕ້ອງໃຫ້ການສະໜັບສະໜູນທີ່ຄົບວົງຈອນນັບຕັ້ງແຕ່ ໄລຍະເລີ້ມຕົ້ນຂອງໄວໜຸ່ມໃນການຈະເລີນເຕີບໂຕໃນສັງຄົມດ້ວຍສຸຂະພາບທີ່ເຂັ້ມແຂງ ກ່ອນຈະເຂົ້າສູ່ໄວເປັນຜູ້ໃຫຍ່ ພ້ອມທັງການໃຫ້ການບໍລິການຕ່າງໆ ເຊັ່ນ: ການເຂົ້າເຖິງການບໍລິການສຸຂະພາບຈະເລີນພັນທີ່ເປັນມິດກັບໄວໜຸ່ມ, ການເຂົ້າເຖິງຂໍ້ມູນຂ່າວສານຂອງໄວໜຸ່ມ ແລະ ການເຂົ້າເຖິງສິ່ງແວດລ້ອມທີ່ປອດໄພ.

ການເຂົ້າເຖິງການບໍລິການສຸຂະພາບຈະເລີນພັນ ໂດຍສະເພາະແມ່ນ ການວາງແຜນຄອບຄົວ ແລະ ການຄຸມກຳເນີດ ໃນປະຈຸບັນ ແມ່ນມີອັດຕາສະເລ່ຍປະມານ 84% (ຢູ່ຕາມບັນດາໂຮງໝໍ) ແຕ່ເຖິງຢ່າງໃດກໍ່ຕາມການເຂົ້າເຖິງການບໍລິການດັ່ງກ່າວນີ້ແມ່ນຖືວ່າຍັງຕ່ຳຕໍ່ກັບກຸ່ມຄົນທີ່ທຸກຍາກ ທີ່ຢູ່ຫ່າງໄກສອກຫຼີກ ເປັນຕົ້ນແມ່ນ ໃນກຸ່ມໄວໜຸ່ມ. ພ້ອມນີ້ ພວກເຮົາກໍ່ເຫັນວ່າ ປະຈຸບັນ ພວກເຮົາຍັງພົບກັບສິ່ງທ້າທາຍຫຼາຍຢ່າງ ໃນນັ້ນພວກເຮົາຍັງມີອັດຕາການເກີດລູກຂອງແມ່ ທີ່ມີອາຍຸ ຕ່ຳກວ່າ 18 ປີ ທີ່ ສູງສົມຄວນ (ປະມານ 38%), ມີອັດຕາການຄຸມກຳເນີດທີ່ຍັງຕ່ຳ ປະມານ 35% ພ້ອມນີ້, ການຖືພາທຸກຄັ້ງຂອງແມ່ຍິງແມ່ນມີໂອກາດເສຍຊີວິດ ຈາກອາການສົນທີ່ເກີດຂື້ນໃນໄລຍະຖືພາ ແລະ ເກີດລູກ ເຊິ່ງສິ່ງທີ່ໜ້າເປັນຫວ່ງທີ່ສຸດໃນປັດຈຸບັນແມ່ນ ການເສຍຊີວິດຂອງແມ່ແມ່ນນັບມື້ນັບສູງຂື້ນໃນກຸ່ມໄວໜຸ່ມ ທີ່ທຸກຍາກ ແລະ ຂາດໂອກາດເຂົ້າເຖິງການບໍລິການສຸຂະພາບຈະເລີນພັນ.

ເພື່ອຕອບໂຕ້ກັບຄວາມຂາດເຂີນທາງດ້ານຊັບພະຍາກອນ ແລະ ວິຊາການໃນເຂດຫ່າງໄກສອກຫຼີກ, ພັກ ແລະ ລັດຖະບານ ໄດ້ສືບຕໍ່ໃຫ້ການສະໜັບສະໜູນໃຫ້ມີການຝຶກອົບຮົມໃຫ້ແກ່ອາສາສະໝັກຂັ້ນບ້ານ ເພື່ອແນະນຳ ແລະ ແຈກຢາຍຢາຄຸມກຳເນີດໃນເຂດຊຸມຊົນ, ການສ້າງຄວາມເຂົ້າໃຈຕໍ່ກັບການບໍລິການ ການວາງແຜນຄອບຄົວ ເພື່ອໃຫ້ຊຸມຊົນເຂົາເຈົ້າ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບການວາງແຜນຄອບຄົວທີ່ດີ. ພ້ອມນີ້,

ພວກເຮົາເຫັນວ່າຈາກຂໍ້ມູນຕົວຈິງ, ການເຂົ້າເຖິງການວາງແຜນຄອບຄົວໂດຍສະໝັກໃຈ ສາມາດຊ່ວຍໃຫ້ຫຼຸດຜ່ອນ ອັດຕາການເສຍຊີວິດຂອງແມ່ ໄດ້ເຖິງ ໜຶ່ງສ່ວນສາມ ແລະ ອັດຕາການເສຍຊີວິດຂອງເດັກນ້ອຍໄດ້ 20 ເປີເຊັນ ເຊິ່ງເປັນສິ່ງສຳຄັນທີ່ສຸດໃນວຽກງານ ການຮັກສາ ແລະ ກອບກູ້ເອົາຊີວິດຂອງແມ່. ດັ່ງນັ້ນ ລັດຖະບານ ແຫ່ງ ສປປລາວ ຍາມ ໃດກໍ່ເອົາໃຈໃສ່ຕໍ່ວຽກງານການສະໜອງອຸປະກອນເພື່ອຊ່ວຍໃນການຄຸມກຳເນີດ ດັ່ງທີ່ ຈັດຕັ້ງປະຕິບັດໃນຊ່ວງງົບປະມານ 3 ປີທີ່ຜ່ານມາ. ອີກເທື່ອໜຶ່ງ, ຂ້າພະເຈົ້າ ໃນນາມຕາງ ໜ້າໃຫ້ແກ່ ລັດຖະບານ ກໍ່ຄືທຸກພາກສ່ວນໃນສັງຄົມ ຈິ່ງຂໍເຊີນຊວນໃຫ້ທຸກໆພາກສ່ວນ ໃນສັງຄົມ ເພື່ອຊ່ວຍກັນໃນການສະໜອງການບໍລິການ ການວາງແຜນຄອບຄົວໃຫ້ທົ່ວເຖິງ.

ການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໂດຍສະເພາະແມ່ນການ ຫຼຸດຜ່ອນ ອັດຕາການຕາຍຂອງແມ່ ແມ່ນຍັງເປັນສິ່ງທ້າທາຍຢູ່ ສປປ ລາວ, ເພາະໃນ ປັດຈຸບັນນີ້ ອີງຕາມໂຕເລກ ຂໍ້ມູນສະຖິຕິ ແຕ່ລະມື້ແມ່ຍິງ ແລະ ເດັກແດງ ຫຼາຍກ່ວາ 2 ຄົນ ຢູ່ ສປປ ລາວ ແມ່ນເສຍຊີວິດຈາກສາເຫດ ອາການສົນໃນຊ່ວງຖືພາ ແລະ ເກີດລູກ ແລະ ຍິ່ງໄປກ່ວານັ້ນ ເປັນສິ່ງທີ່ໜ້າເສົ້າສະຫຼົດໃຈເປັນຢ່າງຍິ່ງຕໍ່ກັບການເສຍຊີວິດສ່ວນ ຫຼາຍແມ່ນແມ່ຍິງໜຸ່ມ ເຊິ່ງບາງຄົນແມ່ນຫາກໍ່ເລີ່ມຖືພາເປັນຄັ້ງທຳອິດໃນຊີວິດ. ແຕ່ເຖິງ ຢ່າງໃດກໍ່ຕາມ ທັງໝົດຂອງການເສຍຊີວິດ ແລະ ການເຈັບປ່ວຍ ແມ່ນສາມາດປ້ອງກັນໄດ້ ຖ້າຜູ້ເປັນແມ່ສາມາດເຂົ້າເຖິງການດູແລ ຈາກຜູ້ທີ່ຊຳນານດ້ານການເກີດ, ມີໂຮງໝໍໃຫ້ບໍລິ ການ ການດູແລສຸກເສີນດ້ານການປະສູດ, ມີຄວາມເປັນອິດສະຫຼະ ແລະ ຮັບຮູ້ ແລະ ເຂົ້າໃຈກ່ຽວກັບການວາງແຜນລູກຫ່າງ ລວມທັງການຫຼີກເວັ້ນການຖືພາແຕ່ໄວໜຸ່ມ ທີ່ມີ ຄວາມສ່ຽງສູງຕໍ່ກັບອາການສົນຕ່າງໆ.

ການເສຍຊີວິດຂອງແມ່ ແລະ ເດັກແດງ ແມ່ນສ້າງຄວາມເຈັບປວດທາງດ້ານຈິດໃຈ ໃຫ້ກັບຄອບຄົວ ເຊິ່ງຖ້າສົມທຽບໃນພາກເສດຖະກິດ ກໍ່ແມ່ນການສູນເສຍຜົນຜະລິດທີ່ໃຫຍ່ ຫຼວງໃນແຕ່ລະປີ. ສະນັ້ນ, ການລົງທຶນ ເຂົ້າໃນການປັບປຸງສຸຂະພາບຂອງແມ່ຍິງ ແລະ ເດັກນ້ອຍ ແມ່ນເປັນສິ່ງສຳຄັນຫຼາຍ ແລະ ຈະສົ່ງຜົນປະໂຫຍດອັນຍິ່ງໃຫ່ຍແກ່ ປະເທດ ຊາດ, ອັນສະແດງອອກບ່ອນວ່າ 1 ໃນ 3 ສາເຫດທີ່ຊຸກຍູ້ເສດຖະກິດອາຊີ ໃຫ້ເຕີບໂຕ

ຊ່ວງປີ 1965 ຫາ 1990 ແມ່ນຍ້ອນການປັບປຸງດ້ານສຸຂະພາບຈະເລີນພັນ ທີ່ສົ່ງຜົນໃຫ້ມີການຫຼຸດຜ່ອນການເສຍຊີວິດຂອງເດັກເກີດໃໝ່/ເດັກນ້ອຍ ແລະ ຊຸກຍູ້ອັດຕາການຈະເລີນພັນທີ່ມີປະສິດທິພາບ.

ການປ້ອງກັນ ແລະ ການລຸດຜ່ອນອັດຕາການເສຍຊີວິດຂອງແມ່ ແມ່ນເປັນພາກສ່ວນໜຶ່ງຂອງຍຸດທະສາດ ທີ່ ລັດຖະບານ ແລະ ອົງການ ສະຫະປະຊາຊາດ ກອງທຶນສໍາລັບປະຊາກອນ ແລະ ບັນດາຄູ່ຮ່ວມພັດທະນາ ຊຸກຍູ້ ແລະ ຜັນຂະຫຍາຍ ໂດຍສະເພາະແມ່ນ ການຜັນຂະຫຍາຍແຜນງານເພື່ອຊ່ວຍສ້າງຜູ້ຊ່ວຍເກີດລູກທີ່ຊໍານານ ເຊິ່ງລວມທັງການສ້າງນາງຜະດຸງຄັນ. ໃນເດືອນທີ່ຜ່ານມາ, ມີຜະດຸງຄັນຈໍານວນ 160 ຄົນໄດ້ຮັບການຂຶ້ນທະບຽນແຫ່ງຊາດ ເຊິ່ງເປັນຊຸດທີສອງ ແລະ ກຽມພ້ອມທີ່ຈະຮັບໃຊ້ຊຸມຊົນໃນຂອບເຂດທົ່ວປະເທດ.

ໃນມື້ນີ້, ລັດຖະບານແຫ່ງ ສປປ ລາວ ໄດ້ຢືນຢັນອີກຄັ້ງໜຶ່ງໃນການປະຕິບັດພັນທະເພື່ອໃຫ້ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ທີ່ 5 ໃນການຮັບປະກັນວ່າແມ່ຍິງ, ຜູ້ຊາຍ ແລະ ໄວໜຸ່ມ ທຸກຄົນ ສາມາດເຂົ້າເຖິງການດູແລດ້ານສຸຂະພາບຈະເລີນພັນ ລວມທັງການວາງແຜນຄອບຄົວ, ການຮັບປະກັນການເຂົ້າເຖິງການບໍລິການຊ່ວຍເກີດລູກ ແລະ ການປ້ອງກັນພະຍາດຕິດຕໍ່ທາງເພດສໍາພັນ ແລະ HIV. ສິ່ງດັ່ງກ່າວນີ້ ມັນໄດ້ບົ່ງບອກເຖິງການບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ຢູ່ ສປປ ລາວ ເພື່ອນໍາພາປະເທດຊາດ ຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາໃຫ້ໄດ້ໃນປີ 2020.

ການປະຕິບັດໃຫ້ບັນລຸຕາມເປົ້າໝາຍທີ່ຄາດໄວ້ນັ້ນ ພວກເຮົາຕ້ອງຮັບປະກັນໄດ້ວ່າພວກເຮົາຕ້ອງມີພະນັກງານທີ່ມີຄຸນນະພາບ ມີຄວາມສາມາດທີ່ພຽງພໍ ເພື່ອຈະຊ່ວຍກັນປະກອບສ່ວນໃນການພັດທະນາ ແລະ ນໍາພາປະເທດຊາດ ກ້າວໄປສູ່ການເຕີບໃຫຍ່ຂະຫຍາຍຕົວ ແລະ ການພັດທະນາທີ່ໝັ້ນຄົງ.

ທ້າຍສຸດນີ້ ຂ້າພະເຈົ້າ ຂໍອວຍພອນໄຊອັນປະເສີດ ມາຍັງການນຳພັກ-ລັດ, ປະຊາຊົນລາວບັນດາເຜົ່າ ແລະ ທຸກໆທ່ານທີ່ຢູ່ພາຍໃນ ແລະ ຢູ່ຕ່າງປະເທດຈົ່ງມີແຕ່ຄວາມສຸກສົມຫວັງ ມີສຸຂະພາບເຂັ້ມແຂງ ແລະ ຈົ່ງພ້ອມໃຈກັນສາມັກຄີ ເພື່ອຮັບປະກັນໃຫ້ໄດ້ການພັດທະນາທີ່ຍືນຍົງ ແລະ ຮັກສາໄວ້ຊັບພະຍາກອນມະນຸດອັນລ້ຳຄ່າ.

**ຂໍຂອບໃຈ.**